# ບົດຂ່າວ

## ກອງປະຊຸມທົບທວນຜົນການດຳເນີນທຸລະກິດ ທົ່ວລະບົບ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳໄຕມາດ 3 ປີ 2017.




ໃນວັນທີ 08-09 ພະຈິກ 2017, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດກອງປະຊຸມທົບທວນຜົນການດຳເນີນທຸລະກິດປະຈຳໄຕມາດ 3/2017 ເຊິ່ງກອງປະຊຸມໄດ້ຈັດຂຶ້ນທີ່ເມືອງວັງວຽງ ແຂວງວຽງຈັນ, ພາຍໃຕ້ການເປັນປະທານ ຂອງ ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່ ທຄຕລ ແລະ ມີຜູ້ເຂົ້າຮ່ວມຂັ້ນ ຄະນະອຳນວຍການ, ຄະນະສາຂາ, ຄະນະພະແນກ, ຄະນະສູນ ແລະ ພະນັກງານທີ່ກ່ຽວຂ້ອງ ລວມທັງໝົດປະມານ 70 ທ່ານ.




ກອງປະຊຸມ ໄດ້ປະເມີນຜົນການດຳເນີນທຸລະກິດຂອງ ທຄຕລ ທົ່ວລະບົບໃນໄລຍະ 9 ເດືອນ 2017, ວາງທິດທາງການດຳເນີນງານ, ຄາດໝາຍການປະຕິບັດງານໄລຍະທ້າຍປີ ພ້ອມທັງໃຫ້ທິດຊີ້ນຳສາຂາ ໃນການຂື້ນແຜນປີ 2018 ໃຫ້ເໝາະສົມຕາມທ່າແຮງຂອງແຕ່ລະສາຂາ. ນອກຈາກນັ້ນ, ກອງປະຊຸມ ຍັງໄດ້ມີການຖອດຖອນບົດຮຽນ ເຊິ່ງກັນ ແລະ ກັນ ໃນວຽກງານການຂະຫຍາຍຜະລິດຕະພັນ, ການປັບປຸງການບໍລິການ, ການປະຕິບັດວຽກງານຕ່າງໆທີ່ສຳຄັນ ເພື່ອການດຳເນີນງານຂອງ ທຄຕລ ສາມາດບັນລຸແຜນການໃນທ້າຍປີ ແລະ ຍັງໄດ້ມີການເຜີຍແຜ່ຂໍ້ມູນກ່ຽວກັບການກະກຽມຄວາມພ້ອມ ການປະຕິບັດ Basel II ຂອງ ທຄຕລ ທີ່ບໍລິສັດທີ່ປຶກສາໄດ້ປະເມີນ ກ່ຽວກັບຊ່ອງຫວ່າງຄວາມສ່ຽງ ຂອງ ທຄຕລ, ເພື່ອໃຫ້ທຸກພາກສ່ວນ ຮັບຮູ້ ທິດທາງການປະຕິບັດໃນຕໍ່ໜ້າທີ່ຕິດພັນກັບພາກສ່ວນຂອງຕົນເອງ ແລະ ຂື້ນແຜນການປະຕິບັດວຽກງານໃນຕໍ່ໜ້າຢ່າງແທດເໝາະ.

ຈາກການລາຍງານເຫັນວ່າ ຜົນການດຳເນີນງານຂອງ ທຄຕລ ໃນ 9 ເດືອນ 2017 ມີຫຼາຍດ້ານທີ່ຕັ້ງໜ້າ, ມີການພັດທະນາຫຼາຍຜະລິດຕະພັນທີ່ພົ້ນເດັ່ນ ຜົນການດຳເນີນທຸລະກິດ ມີກຳໄລບັນລຸແຜນການທີ່ກຳນົດໄວ້, ເຊິ່ງຄະນະອຳນວຍການ ທຄຕລ ກໍ່ໄດ້ມີທິດຊີ້ນຳບັນດາສາຂາເອົາໃຈໃສ່ວຽກງານຕ່າງໆ ເພື່ອໃຫ້ ທຄຕລ ສືບຕໍ່ດຳເນີນງານຢ່າງມີປະສິດທິຜົນ ແລະ ກຳໄລ ເກີນແຜນໃນທ້າຍປີ.